# Kaiser Permanente
# ສະຫຼຸບນະໂຍບາຍການຊ່ວຍທາງການເງິນສໍາລັບຄ່າປິ່ນປົວ

ໂຄງການຊ່ວຍເຫຼືອທາງການເງິນສໍາລັບການປິ່ນປົວ (Medical Financial Assistance, MFA) ຂອງ Kaiser Permanente ໃຫ້ການຊ່ວຍເຫຼືອທາງການເງິນສໍາລັບຄົນເຈັບທີ່ມີເງື່ອນໄຂໄດ້ຮັບ ຊຶ່ງເປັນຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອໃນການຊ່ວຍຈ່າຍສໍາລັບການເບິ່ງແຍງຮັກສາທີ່ສຸກເສີນຫຼືຈໍາເປັນທີ່ເຂົາເຈົ້າໄດ້ຮັບໃນສະຖານພະຍາບານຂອງ Kaiser Permanente ຫຼືໂດຍຜູ້ໃຫ້ບໍລິການຂອງ Kaiser Permanente. ບັນດາຄົນເຈັບສາມາດສະໝັກຂໍເຂົ້າໂຄງການ MFA ໄດ້ຫຼາຍທາງ ລວມເຖິງ ການໄປສະໝັກດ້ວຍຕົນເອງ, ສະໝັກທາງໂທລະສັບ, ຫຼື ໂດຍການຍື່ນສົ່ງໃບສະໝັກທີ່ເປັນເຈ້ຍ. ຄົນເຈັບຕ້ອງມີເງື່ອນໄຂກົງຕາມຂໍ້ກໍານົດຂ້າງລຸ່ມນີ້ເພື່ອໃຫ້ມີສິດໄດ້ຮັບການຊ່ວຍເຫຼືອ.

**ໃຜມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນ ແລະຂໍ້ກໍານົດມີຫຍັງແດ່?**
ທາງໂຄງການຊ່ວຍເຫຼືອຜູ້ມີລາຍໄດ້ຕໍ່າ, ບໍ່ມີປະກັນພັຍ, ຫຼື ຄົນເຈັບທີ່ຂາດໂອກາດຊຶ່ງຕ້ອງການຄວາມຊ່ວຍເຫຼືອໃນການຊ່ວຍຈ່າຍຄ່າປິ່ນປົວ ໃນບາງສ່ວນ ຫຼື ທັງໝົດ. ໂດຍທົ່ວໄປແລ້ວ, ບັນດາຄົນເຈັບມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນເມື່ອລາຍໄດ້ລວມຂອງຄົວເຮືອນຢູ່ທີ່ລະດັບ ຫຼື ຕໍ່າກວ່າ 400% ຂອງລະດັບຄວາມຍາກຈົນທີ່ຣັຖບານກາງກໍານົດໄວ້ (Federal Poverty Guidelines, FPG) ຫຼືມີຄ່າໃຊ້ຈ່າຍດ້ານການປິ່ນປົວທີ່ສູງເກີນປົກກະຕິ. ຄົນເຈັບຄວນປຶກສາກັບທີ່ປຶກສາດ້ານການເງິນເພື່ອພິຈາລະນາຕັດສິນການມີສິດໄດ້ຮັບ ແລະສໍາລັບການຊ່ວຍເຫຼືອໃນການສະໝັກ.

*ບັນດາຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນສໍາລັບຄ່າປິ່ນປົວນັ້ນຈະບໍ່ເກັບຄ່າກາຍຈໍານວນທີ່ເກັບທົ່ວໄປ (amounts generally billed, AGB) ສໍາລັບຄ່າປິ່ນປົວສຸກເສີນ ຫຼືຄ່າເບິ່ງແຍງທີ່ຈໍາເປັນທາງການແພດອື່ນໆ. ເບິ່ງທີ່ເວບໄຊ kp.org/mfa/nw ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບ AGB.*

**Kaiser Permanente ກວດກັ່ນຕອງບັນດາຄົນເຈັບເພື່ອເບິ່ງການມີສິດໄດ້ຮັບສໍາລັບໂຄງການຊ່ວຍເຫຼືອຂອງຣັຖ ແລະເອກະຊົນ ບໍ່?**
Kaiser Permanente ໃຫ້ການຊ່ວຍເຫຼືອແກ່ຄົນເຈັບໃນການກໍານົດຫາໂຄງການປະກັນພັຍຄຸ້ມຄອງສຸຂະພາບທັງຂອງຣັຖ ແລະເອກະຊົນ ທີ່ອາດຊ່ວຍໃນດ້ານຄວາມຕ້ອງການໃນການເຂົ້າເຖິງການເບິ່ງແຍງສຸຂະພາບ. ຄົນເຈັບທີ່ຄິດວ່າມີສິດທີ່ຈະໄດ້ຮັບປະກັນພັຍຄຸ້ມຄອງສຸຂະພາບຂອງຣັຖ ຫຼືເອກະຊົນແມ່ນຈໍາເປັນຕ້ອງສະໝັກເຂົ້າໂຄງການເຫຼົ່ານັ້ນ.

**ໂຄງການນີ້ແມ່ນຄຸ້ມຄອງຫຍັງແດ່?**
ໂຄງການຊ່ວຍເຫຼືອທາງການເງິນສໍາລັບຄ່າປິ່ນປົວຄຸ້ມຄອງຈ່າຍຄ່າ ເບິ່ງແຍງທີ່ຈໍາເປັນທາງການແພດທັງໝົດ ຫຼືບາງສ່ວນຊຶ່ງຈັດຫາໃຫ້ທີ່ຫ້ອງການແພດ, ໂຮງໝໍ, ຮ້ານຂາຍຢາຂອງ Kaiser Permanente ຫຼືຈັດຫາໃຫ້ໂດຍຜູ້ໃຫ້ບໍລິການ ຂອງ Kaiser Permanente. ປະເພດຂອງການບໍລິການທີ່ຢູ່ໃນພາຍໃຕ້ການຄຸ້ມຄອງ ໄດ້ແກ່ບັນດາບໍລິການທີ່ບໍ່ຖືວ່າເປັນເຫດສຸກເສີນ ຫຼື ບໍ່ ຈໍາເປັນທາງການແພດໂດຍຜູ້ໃຫ້ບໍລິການຂອງ Kaiser Permanente, ການເຮັດໝັນ ແລະການບໍລິການຖືພາແທນ ແລະຄ່າງວດປະກັນພັຍສຸຂະພາບ. ກະຣຸນາເບິ່ງລາຍການທີ່ຄົບຖ້ວນຢູ່ໃນນະໂຍບາຍ MFA.

**ມີບໍລິການຊ່ວຍເຫຼືອດ້ານພາສາບໍ່?**
ມີນາຍພາສາໃຫ້ບໍລິການໂດຍທ່ານບໍ່ເສັຽຄ່າ. ໃບສະໝັກຂໍການຊ່ວຍເຫຼືອທາງການເງິນສໍາລັບຄ່າປິ່ນປົວ, ນະໂຍບາຍ, ແລະສະຫຼຸບນະໂຍບາຍນີ້ອາດມີໃຫ້ໃນພາສາຂອງທ່ານ. ສໍາລັບຂໍ້ມູນເພີ່ມເຕີມ, ໂທຣ 800-324-8010 ຫຼື ເບິ່ງທີ່ເວັບໄຊຂອງພວກເຮົາທີ່ kp.org/mfa/nw.

**Kaiser Permanente ມີນະໂຍບາຍການຊ່ວຍເຫຼືອທາງການເງິນບໍ່?**
ທ່ານສາມາດຮ້ອງຂໍສໍາເນົາໄດ້ໂດຍບໍ່ເສັຽຄ່າກ່ຽວກັບນະໂຍບາຍການຊ່ວຍເຫຼືອທາງການເງິນສໍາລັບຄ່າປິ່ນປົວຂອງ Kaiser Permanente ໂດຍໂທຣ 800-813-2000, ສົ່ງໄປສະນີທີ່ 500 NE Multnomah Street, Suite 100, Portland, OR 97232 ຫຼືເບິ່ງທີ່ເວັບໄຊຂອງພວກເຮົາທີ່ kp.org/mfa/nw.

**ຕ້ອງການຄວາມຊ່ວຍເຫຼືອບໍ່?**
ສໍາລັບຄວາມຊ່ວຍເຫຼືອ ຫຼື ຄໍາຖາມກ່ຽວກັບຂັ້ນຕອນການສະໝັກຂໍການຊ່ວຍເຫຼືອທາງການເງິນສໍາລັບຄ່າປິ່ນປົວ, ກະຣຸນາໂທຣ 800-813-2000, ຫຼື ປຶກສາກັບທີ່ປຶກສາທາງການເງິນໃກ້ພະແນກບໍລິການທຸລະກິດສໍາລັບຄົນເຈັບ ຢູ່ທີ່ໂຮງໝໍໃດໆ ຂອງ Kaiser Permanente.

**ຂ້າພະເຈົ້າສະໝັກໄດ້ແນວໃດ?**
ທ່ານສາມາດສະໝັກຂໍການຊ່ວຍເຫຼືອທາງການເງິນສໍາລັບຄ່າປິ່ນປົວໄດ້ໃນຫຼາຍທາງ -- ທັງໂດຍການໄປຂໍຂໍ້ມູນດ້ວຍຕົນເອງ ຫຼື ໂດຍທາງໂທຣະສັບ ຫຼື ໂດຍຂໍໃບສະໝັກທີ່ເປັນເຈ້ຍ ຈາກແຫຼ່ງບໍລິການດັ່ງຕໍ່ໄປນີ້:

- ທີ່ປຶກສາທາງການເງິນໃກ້ພະແນກບໍລິການທຸລະກິດສໍາລັບຄົນເຈັບ ຫຼື ໂຕະລົງທະບຽນທີ່ໂຮງໝໍໃດໆ ຂອງ Kaiser Permanente
- ໂທຣ 800-813-2000
- ໂດຍທາງໄປສະນີ (ບໍ່ເສັຽຄ່າ) ທີ່ 500 NE Multnomah Street, Suite 100, Portland, OR 97232
- ດາວໂຫລດໃບສະໝັກຜ່ານເວັບໄຊຊຸມຊົນຂອງ Kaiser Permanente ທີ່ kp.org/mfa/nw.

ກະຣຸນາສົ່ງຄືນໃບສະໝັກທີ່ປະກອບຄົບຖ້ວນແລ້ວ (ລວມເຖິງ ເອກະສານທີ່ຈໍາເປັນທັງໝົດ ແລະຂໍ້ມູນທີ່ລະບຸໄວ້ໃນຄໍາແນະນໍາຂອງໃບສະໝັກ) ໄປທີ່ໂຕະລົງທະບຽນຂອງໂຮງໝໍ Kaiser Permanente ທີ່ຢູ່ໃກ້ທີ່ສຸດ ຫຼື ສົ່ງໄປສະນີໄປທີ່: ໂຄງການ MFA ເລກທີ່ 500 NE Multnomah Street, Suite 100, Portland, OR 97232.

Kaiser Permanente ຈະທວນຄືນໃບສະໝັກທີ່ສົ່ງມາ ເມື່ອໃບສະໝັກນັ້ນສົມບູນ ແລະຈະພິຈາລະນາຕັດສິນວ່າທ່ານມີສິດໄດ້ຮັບຫຼືບໍ່ ໂດຍສອດຄ່ອງກັບນະໂຍບາຍການຊ່ວຍເຫຼືອທາງການເງິນສໍາລັບຄ່າປິ່ນປົວຂອງ Kaiser Permanente. ໃບສະໝັກທີ່ບໍ່ຄົບຖ້ວນອາດສົ່ງຜົນໃຫ້ເກີດຄວາມຫຼ້າຊ້າໃນການດໍາເນີນການ ຫຼື ການປະຕິເສດໃບສະໝັກ MFA, ແຕ່ Kaiser Permanente ຈະແຈ້ງໃຫ້ຜູ້ສະໝັກຮູ້ ແລະໃຫ້ໂອກາດໃນການສົ່ງເອກະສານ ຫຼືຂໍ້ມູນທີ່ຂາດຫາຍໄປ, ພາຍໃນວັນທີທີ່ກໍານົດໄວ້.

©2015 Kaiser Foundation Hospital;
Kaiser Foundation Health Plan, Inc.